# Year 1 Phonics Screening Check

Information for parents and carers

# ການກວດ Phonics(ການອອກສຽງ) ແບບຄັດກອງ ຂອງ ປີ1

ຂໍ້ມູນສຳລັບພໍ່ແມ່ ແລະ ຜູ້ດູແລ




## phonics ແມ່ນຫຍັງ?

Phonics ແມ່ນຄວາມສຳພັນລະຫວ່າງຕົວອັກສອນແລະສຽງແລະມີຄວາມສຳຄັນໃນການຮຽນຮູ້ການອ່ານ. ເດັກນ້ອຍບາງຄົນປະສົບບັນຫາໃນການຮຽນຮູ້ການອ່ານ ສະນັ້ນມັນເປັນສິ່ງສຳຄັນທີ່ຈະຕ້ອງລະບຸຕົວເດັກນ້ອຍເຫຼົ່ານີ້ໃຫ້ໄວທີ່ສຸດ. ດ້ວຍວິທີນີ້, ຄູສອນສາມາດວາງແຜນການສະໜັບສະໜູນສະເພາະທີ່ພວກເຂົາຕ້ອງການໄດ້.

### ການກວດ Phonics ແບບຄັດກອງ ຂອງ ປີ1 ແມ່ນຫຍັງ?

ການກວດ Phonics ແບບຄັດກອງ ຂອງ ປີ1 ແມ່ນການປະເມີນສັ້ນໆທົ່ວລັດທີ່ຈະແຈ້ງໃຫ້ຄູສອນຊາບວ່າລູກຂອງທ່ານມີຄວາມກ້າວໜ້າທາງດ້ານການອ່ານອອກສຽງແນວໃດ. ການກວດແບບຄັດກອງນີ້ຈະສັງເກດວ່າລູກຂອງທ່ານສາມາດອ່ານຄຳສັບພາສາອັງກິດທີ່ມີການປະສົມຕົວອັກສອນທີ່ແຕກຕ່າງກັນໄດ້ແບບໃດ. ລູກຂອງທ່ານຈະນັ່ງກັບຄູສອນແລະຈະຖືກຂໍໃຫ້ອ່ານ 40 ຄຳດັ່ງໆ. ຄຳເຫຼົ່ານີ້ປະກອບມີ 20 ຄຳທີ່ແທ້ຈິງ ແລະ 20 ຄຳທີ່ບໍ່ມີຄວາມໝາຍ. ຈຸດປະສົງຂອງຄຳທີ່ບໍ່ມີຄວາມໝາຍແມ່ນເພື່ອເບິ່ງວ່ານັກຮຽນສາມາດໃຊ້ຄວາມຮູ້ຂອງພວກເຂົາໃນການຜະສົມຜະສານເພື່ອອ່ານຄຳສັບໃດໜຶ່ງແທນທີ່ຈະເປັນຄວາມຊົງຈຳຂອງພວກເຂົາທີ່ໄດ້ເຫັນຄຳນັ້ນມາກ່ອນ. ຕາມປົກກະຕິການທົດສອບຈະໃຊ້ເວລາ 5-7 ນາທີ. ຖ້າລູກຂອງທ່ານມີບັນຫາ ຄູຈະຢຸດການກວດສອບ. ການກວດສອບຖືກອອກແບບຢ່າງລະມັດລະວັງເພື່ອບໍ່ໃຫ້ເກີດຄວາມກົດດັນກັບລູກຂອງທ່ານ.

ຈຸດປະສົງຕົ້ນຕໍຂອງການກວດກາ Phonics ແບບຄັດກອງ ຂອງ ປີ1 ແມ່ນເພື່ອໃຫ້ຂໍ້ມູນໃຫ້ຄູສອນຂອງລູກທ່ານ ເຊິ່ງຈະຊ່ວຍໃຫ້ເຂົາເຈົ້າສາມາດວາງແຜນການຮຽນຮູ້ຂອງລູກທ່ານໄດ້. ເດັກແຕ່ລະຄົນຈະຖືກປະເມີນເປັນສ່ວນບຸກຄົນໂດຍຄູ ແລະ ນັກຮຽນ ປີ1 ທັງໝົດຈະໄດ້ຮັບການປະເມີນ.

### ເປັນຫຍັງ phonics ຈຶ່ງສຳຄັນ?

ຄວາມຮູ້ ແລະ ທັກສະການອອກສຽງຖືເປັນສິ່ງສຳລັບການຮຽນຮູ້ການອ່ານ ແລະ ຂຽນພາສາອັງກິດ. ເພື່ອປະສົບຜົນສຳເລັດ, ນັກຮຽນຕ້ອງຮຽນຮູ້ສຽງທີ່ສະແດງດ້ວຍຕົວອັກສອນແຕ່ລະຕົວຫຼືການປະສົມຕົວອັກສອນຕ່າງໆທີ່ແຕກຕ່າງກັນ ແລະ ທັກສະຂອງການຜະສົມສຽງເຫຼົ່ານີ້ເຂົ້າກັນເພື່ອອ່ານຄຳສັບຕ່າງໆ. ຜູ້ອ່ານຂັ້ນເລີ່ມຕົ້ນຕ້ອງຮຽນຮູ້ວິທີການຜະສົມສຽງເຂົ້າກັນໃນຄຳສັບຕ່າງໆຢ່າງໄວວາແລະຄ່ອງແຄ້ວ ເພື່ອບໍ່ໃຫ້ລົບກວນຄວາມລ່ຽນໄຫຼຂອງການອ່ານແລະຄວາມເຂົ້າໃຈຂອງຂໍ້ຄວາມຂອງພວກເຂົາ.

ກະລຸນາຕິດຕໍ່ໂຮງຮຽນຖ້າທ່ານມີຄຳຖາມໃດໆກ່ຽວກັບການກວດ Phonics ແບບຄັດກອງ ຂອງ ປີ1

### ບໍລິການນາຍພາສາທາງໂທລະສັບ

ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອຈາກນາຍພາສາເພື່ອຕິດຕໍ່ໂຮງຮຽນ, ກະລຸນາໂທຫາ ເບີ 131 450 ບອກຜູ້ຮັບສາຍວ່າທ່ານຕ້ອງການພາສາໃດ ແລະ ຂໍໃຫ້ພວກເຂົາໂທຫາໂຮງຮຽນ. ຜູ້ຮັບສາຍຈະຫານາຍພາສາຢູ່ໃນສາຍເພື່ອຊ່ວຍທ່ານໃນການສົນທະນາຂອງທ່ານ. ທ່ານຈະບໍ່ຖືກເກັບຄ່າບໍລິການນີ້.